**ສະມາຄົມ ຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດ (ສຊຟຄ)**

**Quality of Life Association (QLA)**

ເຮືອນເລກທີ 41/03, ບ້ານໂພນສະຫວັນໄຊ, ເມືອງແປກ, ແຂວງຊຽງຂວາງ House No.41/03, Phonsavanhxai Village, Peak District, Xiengkhouang province

# ຕຳແໜ່ງ ຜູ້ອຳນວຍຄວາມສະດວກ (Facilitator)

QLA ໄດ້ສ້າງຕັ້ງຂຶ້ນໃນປີ 2011 ເຄື່ອນໄຫວພາຍໃນແຂວງຊຽງຂວາງ ແລະ ໄດ້ຍົກລະດັບຈົດທະບຽນເປັນສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດໃນປີ 2020 ເພື່ອຈຸດປະສົງສະເພາະໃນການຊ່ວຍເຫຼືອຜູ້ເຄາະຮ້າຍຈາກລະເບີດບໍ່ທັນແຕກ (UXO) ແລະ ຄົນພິການ (PWD) ໃນ ສປປ ລາວ. QLA ໄດ້ຈັດຕັ້ງປະຕິບັດຫຼາຍໂຄງການໃນການຊ່ວຍເຫຼືອຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ເຊິ່ງລວມມີການລະດົມທຶນເພື່ອປິ່ນປົວຜູ້ທີ່ຖືກອຸປະຕິເຫດຈາກລະເບີດບໍ່ທັນແຕກ, ການຕິດຕາມຊຸກຍູ້ຜູ້ລອດຊີວິດ, ສຳຫຼວດຜູ້ລອດຊີວິດຈາກລະເບີດບໍ່ທັນແຕກໃໝ່ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ເພື່ອຕອບສະໜອງຄວາມຕ້ອງການຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ສົ່ງຕໍ່ໃຫ້ສູນຟື້ນຟູໜ້າທີ່ການ ແລະ ບັນດາພະແນກການຢູ່ພາຍໃນແຂວງ ໃຫ້ການຊ່ວຍເຫຼືອດ້ານການແພດ ແລະ ສືບຕໍ່ປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກກະສິກຳ ແລະ ປ່າໄມ້ ຈັດຕັ້ງການລ້ຽງສັດ ແລະ ພະແນກສຶກສາ (ວິທະຍາໄລເຕັກນິກວິຊາຊີບແບບປະສົມປະສານ) ເພື່ອເຝິກອົບຮົມວິຊາຊີບຕ່າງໆ ໃຫ້ຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ກຸ່ມຄົນພິການທົ່ວໄປ, ສະມາຄົມພວກເຮົາມີຄວາມຕ້ອງການເພື່ອນຮ່ວມງານລາຍລະອຽດດັ່ງລຸ່ມນີ້:

***ເງື່ອນໄຂການສະໝັກ ແລະ ຄຸນວຸດທິ:***

- ການສຶກສາຈົບຊັ້ນສູງຂຶ້ນໄປ ຫຼືມີປະສົບການ ທີ່ກ່ຽວຂ້ອງດ້ານການພັດທະນາຊົນນະບົດ, ພັດທະນາຊຸມຊົນ, ກະສິກຳ, ສາທາລະນະສຸກ, ສຶກສາ ຫຼື ສາຂາທີ່ກ່ຽວຂ້ອງ.
- ມີທັກສະການນຳໃຊ້ຄອມພິວເຕີ Word, Excel, E-mail, Power-point ແລະ ອື່ນໆ.
- ມີຄວາມສາມາດໃນການເຮັດວຽກກັບຄົນທີ່ມີຄວາມພິການ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກລະເບີດ.
- ມີຄວາມຫ້າວຫັນ, ມີມະນຸດສຳພັນດີໃນການເຮັດວຽກຮ່ວມກັບພະນັກງານຄົນລາວ, ຕ່າງປະເທດ ແລະ ຊຸມຊົນ.
- ມີປະສົບການເຮັດວຽກກັບໂຄງການ ຫຼື ບໍລິສັດ ທີ່ເຮັດວຽກກັບຊຸມຊົນໂດຍສະເພາະແມ່ນຜູ້ຖືກເຄາະຮ້າຍຈາກລະເບີດ ແລະ ຜູ້ມີຄວາມພິການ.
- ສັນຊາດລາວ, ອາຍຸ 20-35 ປີ, ສຸຂະພາບແຂງແຮງ ສາມາດເຮັດວຽກພາກສະໜາມ ແລະ ນອນຄ້າງຄືນຢູ່ສະໜາມໄດ້.
- ມີແນວຄິດສ້າງສັນ, ຮຽນຮູ້-ແລກປ່ຽນ ແລະ ພັດທະນາຕົນ.
- ມີຄວາມຮູ້ທາງດ້ານການສື່ສານພາສາອັງກິດ
- ຖ້າສາມາດປາກເວົ້າພາສາທ້ອງຖິ່ນໄດ້ (ພາສາມົ້ງ ແລະ ກຶມມຸ) ແລະ ຖ້າເປັນຄົນພິການທີ່ມີຄວາມຮູ້ດ້ານນີ້ຈະພິຈາລະນາພິເສດ.

***ໜ້າທີ່ຮັບຜິດຊອບ Responsibilities:***

- ຂຶ້ນແຜນກິດຈະກຳ-ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານ.
- ລົງເຮັດວຽກຢູ່ຊຸມຊົນ ຕາມຮູບແບບກິດຈະກຳໂຄງການ, ນຳໃຊ້ແບບຟອມຂອງໂຄງການ....
- ປະສານງານ, ສ້າງສາຍພົວພັນທີ່ດີກັບຄູ່ຮ່ວມງານ, ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ.
- ວາງແຜນການຈັດຕັ້ງປະຕິບັດກິດຈະກຳຮ່ວມກັບທີມງານ ແລະ ລາຍງານການປະຕິບັດງານ.
- ປັບປຸງແຜນປະຕິບັດວຽກ action plan (ເປົ້າໝາຍ ແລະ ການຊ່ວຍເຫຼືອ) ກັບຄົນພິການ ແລະ ຄອບຄົວຂອງເຂົາເຈົ້າ
- ປະຕິບັດຕາມມາດຖານເຄື່ອງມືທີ່ວາງໄວ້ ແລະ ເຄື່ອງມືສະເພາະຂອງການຊ່ວຍເຫຼືອຕ່າງໆທີ່ອອກແບບກິດຈະ ກຳ
- ຊ່ວຍວຽກງານທີ່ກ່ຽວຂ້ອງຂອງໜ່ວຍງານບໍລິຫານ ສະມາຄົມ

***ຊ່ອງທາງການສະໝັກ:*** ທ່ານທີ່ສົນໃຈສາມາດສົ່ງເອກະສານສະໝັກວຽກ (Cover Letter) ແລະ ຊີວະປະຫວັດ (CV)

ສົ່ງມາທີ່ ອີເມວ Phetsakhone29@gmail.com ແລະ CC: qualifasc@gmail.com

ໂທລະສັບ 061 211124, 020 55844477.

ຂໍ້ມູນເພີ່ມເຕີມກ່ຽວກັບສະມາຄົມ ເບິ່ງໄດ້ທີ່: www.qlalaos.org; https://www.facebook.com/QLACenter